# ການເປັນພົນລະເມືອງ ແລະ ສິດທາງດ້ານກົດໝາຍໃນການເຮັດວຽກ

ຕາມເງື່ອນໄຂຂອງການມີສິດໄດ້ຮັບຜົນປະໂຫຍດປະກັນໄພການວ່າງງານ, ກົດລະບຽບຂອງລັດຖະບານກາງຮຽກຮ້ອງໃຫ້ຜູ້ຮ້ອງຂໍຍອມຮັບພາຍໃຕ້ບົດລົງໂທດຂອງການລະເມີດບໍ່ວ່າລາວຈະເປັນພົນລະເມືອງ ຫຼື ຖືສັນຊາດຂອງສະຫະລັດອາເມຣິກາກໍຕາມ. ບຸກຄົນທີ່ບໍ່ແມ່ນພົນລະເມືອງ ຫຼື ຖືສັນຊາດຂອງສະຫະລັດອາເມລິກາຕ້ອງສະແດງເອກະສານການລົງທະບຽນຄົນຕ່າງດ້າວເພື່ອຢືນຢັນວ່າຕົນເອງໄດ້ຖືກອະນຸຍາດໃຫ້ເຮັດວຽກຢູ່ສະຫະລັດອາເມລິກາ.

ກົມດ້ານຄວາມປອດໄພການຈ້າງງານ (Employment Security Department, ESD) ຢັ້ງຢືນສະຖານະການເຂົ້າເມືອງຂອງບຸກຄົນໂດຍຜ່ານລະບົບການຢັ້ງຢືນຄົນຕ່າງດ້າວທີ່ເປັນລະບົບສໍາລັບການໃຫ້ສິດ (Systematic Alien Verification for Entitlements, SAVE). ໂຄງການ SAVE ແມ່ນຖືກຄຸ້ມຄອງໂດຍການບໍລິການພົນລະເມືອງ ແລະ ການເຂົ້າເມືອງຂອງສະຫະລັດອາເມລິກາ (U.S. Citizenship and Immigration Services, USCIS).

## ຖ້າຂ້ອຍບໍ່ແມ່ນພົນລະເມືອງສະຫະລັດອາເມລິກາຂ້ອຍສາມາດສະໝັກຮັບຜົນປະໂຫຍດການວ່າງງານໄດ້ບໍ?

ໄດ້, ຜູ້ທີ່ບໍ່ແມ່ນພົນລະເມືອງ ຫຼື ຖືສັນຊາດຂອງສະຫະລັດອາເມລິກາສາມາດສະໝັກຮັບຜົນປະໂຫຍດການວ່າງງານໄດ້. ທ່ານຕ້ອງໃຫ້ເອກະສານການລົງທະບຽນຄົນຕ່າງດ້າວແກ່ກົມເພື່ອຢືນຢັນສະຖານະການເຂົ້າເມືອງຂອງທ່ານ. ເອກະສານນີ້ຕາມປົກກະຕິແລ້ວແມ່ນຈະຖືກເອົາໃຫ້ໃນຕອນທີ່ສະໝັກ. ຖ້າທ່ານບໍ່ສາມາດສະໜອງຂໍ້ມູນນີ້ໃນລະຫວ່າງຂັ້ນຕອນການສະໝັກທ່ານຈະຖືກຮ້ອງຂໍໃຫ້ສະໜອງເອກະສານພາຍຫຼັງ.

## ຂ້ອຍຈະຖືກຖາມຫຍັງໃນລະຫວ່າງຂັ້ນຕອນການສະໝັກ?

ຖ້າທ່ານຖືກຮັບຮອງວ່າທ່ານບໍ່ແມ່ນພົນລະເມືອງສະຫະລັດອາເມລິກາ ຫຼື ຖືສັນຊາດອາເມລິກາ, ທ່ານຈະຖືກຖາມວ່າ:

- ທ່ານມີສິດເຮັດວຽກຢູ່ສະຫະລັດອາເມລິກາຢ່າງຖືກຕ້ອງຕາມກົດໝາຍໃນ 24 ເດືອນຜ່ານມາບໍ? ແລະ
- ເອກະສານການເຂົ້າເມືອງລ່າສຸດທີ່ທ່ານມີແມ່ນຫຍັງແນ່?
  - I-327 ໃບອະນຸຍາດເຂົ້າເຮືອນ (I-327 Reentry Permit)
  - I-551 ບັດຜູ້ພັກອາໄສຖາວອນ (I-551 Permanent Resident Card)
  - I-571 ເອກະສານການເດີນທາງຜູ້ລີ້ໄພ (I-571 Refugee Travel Document)
  - I-766 ບັດອະນຸຍາດການຈ້າງງານ (I-766 Employment Authorization Card)
  - I-94 ບັນທຶກການເຂົ້າ/ການອອກປະເທດ (I-94 Arrival/Departure Record)
  - I-94 ບັນທຶກການເຂົ້າ/ອອກປະເທດໃນໜັງສືເດີນທາງຕ່າງປະເທດທີ່ຍັງບໍ່ທັນໝົດອາຍຸ
  - ວີຊ່າເຂົ້າເມືອງ

- ○ ສະແຕມປະເພດ I-551 ຊົ່ວຄາວ (ໃນໜັງສືຜ່ານແດນ ຫຼື I-94)

**ຂ້ອຍມີບັນທຶກການເຂົ້າ/ອອກຢູ່ປະເທດ I-94 ຢູ່ໃນໜັງສືເດີນທາງຕ່າງປະເທດທີ່ຍັງບໍ່ທັນໝົດອາຍຸ. ຂ້ອຍຕ້ອງຕື່ມຫຍັງໃສ່ແນ່?**

ຖ້າທ່ານມີໃບບັນທຶກການເຂົ້າ/ອອກປະເທດ I-94 ຢູ່ໃນໜັງສືເດີນທາງຕ່າງປະເທດທີ່ຍັງບໍ່ທັນໝົດອາຍຸ ທ່ານຈະຕ້ອງໃສ່ຂໍ້ມູນດັ່ງຕໍ່ໄປນີ້:

- ເລກໜັງສືເດີນທາງຂອງທ່ານ,
- ເລກ I-94 ຂອງທ່ານ ແລະ
- ວັນໝົດອາຍຸ.

**ຂ້ອຍມີບັນທຶກການເຂົ້າ/ອອກປະເທດ I-94 ຢູ່ໃນໜັງສືເດີນທາງຕ່າງປະເທດທີ່ຍັງບໍ່ທັນໝົດອາຍຸແຕ່ວ່າບໍ່ມີວັນໝົດອາຍຸບອກ. ຂ້ອຍຈະຕື່ມຫຍັງ?**

ຖ້າທ່ານມີບັນທຶກການເຂົ້າ/ອອກປະເທດ I-94 ຢູ່ໃນໜັງສືເດີນທາງຕ່າງປະເທດທີ່ຍັງບໍ່ທັນໝົດອາຍຸແຕ່ບໍ່ມີວັນໝົດອາຍຸບອກເນື່ອງຈາກໄລຍະເວລາຂອງການຮັບອະນຸຍາດເຂົ້າຂອງທ່ານແມ່ນຖືກຈໍ້າກາໂດຍກົມປ້ອງກັນຄວາມສະຫງົບພາຍໃນປະເທດ (Department of Homeland Security) ຕາມໄລຍະເວລາຂອງການພັກເຊົາ (Duration of Stay, D/S), ທ່ານສາມາດໃສ່ວັນທີໃນການເຮັດ I-94 ຫຼື ວັນທີເຂົ້າ, ແທນທີ່ຈະໃສ່ວັນທີໝົດອາຍຸ.

ຖ້າທ່ານຍັງມີໜັງສືເດີນທາງທີ່ໃຊ້ໄດ້, ທ່ານສາມາດໃສ່ວັນໝົດອາຍຸຢູ່ໜັງສືເດີນທາງຂອງທ່ານ.

ຄຳແນະນຳນີ້ໄດ້ຖືກສະໜອງໃຫ້ໂດຍກົມປ້ອງກັນຄວາມສະຫງົບພາຍໃນປະເທດ.

**ຂ້ອຍຈະເຮັດແນວໃດຖ້າຂ້ອຍບໍ່ມີໃບ I-94 ຂອງຂ້ອຍ?**

ຖ້າທ່ານບໍ່ມີສຳເນົາໃບ I-94 ຂອງທ່ານ, ທ່ານສາມາດເຂົ້າໄປທີ່ກົມປ້ອງກັນຄວາມສະຫງົບພາຍໃນປະເທດເພື່ອຂໍເອົາສຳເນົາເອເລັກໂຕຣນິກ ຢູ່ບ່ອນນີ້.

ຖ້າທ່ານບໍ່ສາມາດເຂົ້າເຖິງສຳເນົາເອເລັກໂຕຣນິກໃບ I-94 ຂອງທ່ານ, ທ່ານສາມາດຂໍເອົາສຳເນົາ ບ່ອນນີ້.

**ຂ້ອຍເປັນຄົນເຮັດວຽກແບບບໍ່ມີເອກະສານ. ຂ້ອຍມີຄຸນສົມບັດໄດ້ຮັບຜົນປະໂຫຍດບໍ?**

ທ່ານຕ້ອງໄດ້ຮັບອະນຸຍາດໃຫ້ເຮັດວຽກຢູ່ສະຫະລັດອາເມລິກາເພື່ອໃຫ້ມີສິດໄດ້ຮັບຜົນປະໂຫຍດການວ່າງງານ ແລະ ການຂະຫຍາຍຜົນປະໂຫຍດການວ່າງງານພາຍໃຕ້ກົດໝາຍວ່າດ້ວຍ (Coronavirus Aid, Relief, and Economic Security, CARES) ຂອງລັດຖະບານກາງ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ໄດ້ຄຳນຶງເຖິງສະຖານະຄົນເຂົ້າເມືອງມາພິຈາລະນາການມີສິດເຂົ້າຮ່ວມໂຄງການເງິນຊ່ວຍເຫຼືອສຳລັບຄອບຄົວ ແລະ ການລາປ່ວຍຂອງລັດ (Paid Family and Medical Leave). ສະນັ້ນ, ຖ້າທ່ານບໍ່ສະບາຍແຮງ ຫຼື

ເບິ່ງແຍງຄົນທີ່ບໍ່ສະບາຍແຮງ, ໂຄງການນີ້ອາດຈະຊ່ວຍໄດ້.
ຮຽນຮູ້ເພີ່ມເຕີມໄດ້ທີ່ paidleave.wa.gov ຫຼື tometiempo.org.

**ການໄດ້ຮັບຜົນປະໂຫຍດໃນການວ່າງງານ ຫຼື ເງິນຊ່ວຍເຫຼືອຄອບຄົວ/ການລາປ່ວຍໄດ້ເປັນການຂັດຂວາງຕໍ່ຄວາມສາມາດຂອງຂ້ອຍທີ່ຈະສະໝັກຂໍບັດຂຽວ ຫຼື ການເປັນພົນລະເມືອງພາຍໃຕ້ກົດລະບຽບບຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອດ້ານການເງິນຈາກລັດເພື່ອການຢູ່ອາໃສບໍ?**

ບໍ່. ປະກັນໄພວ່າງງານ ແລະ ເງິນຊ່ວຍເຫຼືອສໍາລັບຄອບຄົວ ແລະ ການລາປ່ວຍບໍ່ໄດ້ລວມຢູ່ໃນ ການກໍານົດບຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອດ້ານການເງິນຈາກລັດເພື່ອການຢູ່ອາໃສ.

ພະແນກ Employment Security ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ມີການຊ່ວຍເຫຼືອ ແລະ ການບໍລິການເສີມຕາມຄໍາຂໍໃຫ້ແກ່ຄົນທີ່ພິການ. ມີການບໍລິການຊ່ວຍເຫຼືອດ້ານພາສາໃຫ້ແກ່ຄົນທີ່ມີຄວາມສາມາດດ້ານພາສາອັງກິດທີ່ຈໍາກັດໂດຍບໍ່ເສຍຄ່າ. ການບໍລິການ Washington Relay: 711